ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໜັ້ນ...
MODERN QUICK RELIAB...

ສຳນັກງານໃຫຍ່

ເລກທີ: 0830/ທຄຕລ.2025
ນະຄອນຫຼວງວຽງຈັນ, ວັນທີ: 19 MAR 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍ ສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນຶກ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍສິນຄ້າເຄື່ອງທີ່ລະນຶກ ເພື່ອເຂົ້າຮ່ວມການປະມູນລາຄາ ທີ່ ທຄຕລ ຈະນຳໃຊ້ເປັນເຄື່ອງທີ່ລະນຶກໃຫ້ແກ່ລູກຄ້າ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ / ຮູບພາບ |
|---|---|---|
| 1 | **ຈອກແກ້ວ 4 ໜ່ວຍ/ກັບ**<br>• ມີແຂບຄຳ ຢູ່ປາກຈອກ, ສະກຼີນໂລໂກ້ສີທອງ 01 ຈຸດ<br>• ບັນຈຸໃສ່ກັບເຈ້ຍສີແດງ-ແຂງ, ສະກຼີນໂລໂກ້ສີທອງ 01 ຈຸດ | **4,000 ກັບ**<br>**(16,000 ໜ່ວຍ)**<br> |
| 2 | **ຈອກແກ້ວ 1 ໜ່ວຍ/ກັບ**<br>• ມີແຂບຄຳ ຢູ່ປາກຈອກ, ສະກຼີນໂລໂກ້ສີທອງ 01 ຈຸດ<br>• ບັນຈຸໃສ່ກັບເຈ້ຍສີແດງ-ແຂງ, ສະກຼີນໂລໂກ້ສີທອງ 01 ຈຸດ | **25,000 ໜ່ວຍ**<br><br> |
| 3 | **ປາກກາ**<br>• ນ້ຳມຶກສີຟ້າ, ຫົວປາກກາ 0,7 mm.<br>• ພິມສີໂລໂກ້ 1 ຈຸດ<br>• ການຫຸ້ມຫໍ່: 50 ກ້ານ/ກັບ, 10 ກັບ/ແກັດ. | **43,000 ກ້ານ**<br> |
| 4 | **ຄັນຮົ່ມກ້ານສັ້ນ 02 ພັບ**<br>• ຜ້າ: 190T Polyester ເຄືອບກັນ UV ສີດຳ, ໂຄງເຫຼັກດຳ, ພິມສີຕາມ Artwork.<br>• ດ້າມຈັບ: ພຼາສຕິກ, ປຸ່ມກົດມີເປີດ<br>• ສາຍຮັດ: ແບບຕິດ<br>• ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>• ການຫຸ້ມຫໍ່: 12 ກ້ານ/ກັບ, 10 ກັບ/ແກັດ. | **13,500 ກ້ານ**<br> |


ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

| | | |
|---|---|---|
| 5 | **ຄັນຮົ່ມສອງຊັ້ນ 30 ນີ້ວ**<br>• ຜ້າ: 190T Polyester ເຄືອບກັນ UV ສີປອນເງິນ, ໂຄງ ເຫຼັກດໍາ, ພິມສີຕາມ Artwork.<br>• ດ້າມຈັບ: ພລາສຕິກ, ປຸ່ມກົດມືເປີດ<br>• ສາຍຮັດ: ແບບຕິດ<br>• ຊອງໃສ່ຄັນຮົ່ມ: ຊອງຜ້າສີແດງ<br>• ການຫຸ້ມຫໍ່: 10 ກ້ານ/ກັບ, 10 ກັບ/ແກັດ. | **2,000 ກ້ານ**<br> |
| 6 | **ປຶ້ມບັນທຶກ**<br>• ຂະໜາດ A5, ໃສ່ຢ່ວງຂາວເຕັມເຫຼັ້ມ<br>• ປົກແດງໜ້າ-ຫຼັງ ເຈ້ຍກາກຕົງ ເບີ 24 ພິມສີດ້ານ, ປົກຫຼັງ ພິມສອງໜ້າ<br>• ເຈ້ຍທາງໃນ: ເຈ້ຍປອນຂາວໜາ 80 ແກຼມ ຈໍານວນ 200 ໜ້າ (100 ໃບ) ບໍ່ລວມໜ້າປົກ, ດ້ານໃນພິມ ໂລໂກ້ ທຄຕລ ຕາມ Artwork.<br>• ການຫຸ້ມຫໍ່: 20 ຫົວ/ແກັດ. | **10,000 ຫົວ**<br><br> |
| 7 | **ຖົງຜ້າ**<br>• ຜ້າ Canvas ຂະໜາດ 27*37*15,5 cm<br>• ຫູຫິ້ວຍາວ 32,5 cm<br>• ໃສ່ດຸມແຕັບ<br>• ພິມສີຕາມ Artwork.<br>• ການຫຸ້ມຫໍ່: 100 ຖົງ/ແກັດ. | **8,000 ຖົງ**<br><br> |
| 8 | **ຖົງເຈ້ຍ ທຄຕລ**<br>• ເຈ້ຍ 210 ແກຣມ ເຄືອບ PVC 1 ໜ້າ; ຂະໜາດ 28*12*35 cm;<br>• ຫູຫິ້ວເຊືອກແດງສອງເສັ້ນ, ຍາວ 12 cm.<br>• ພື້ນຮອງດ້ວຍເຈ້ຍແຂງໜາ;<br>• ພິມສີຕາມ Artwork;<br>• ການຫຸ້ມຫໍ່: 100 ຖົງ/ແກັດ. | **17,000 ຖົງ**<br> |
| 9 | **ຈອກນໍ້າ ເກັບອຸນຫະພູມ**<br>• Tumbler TB17-510 ml<br>• ຂ້າງໃນເປັນສະແຕນເລດ SUS 304<br>• ພິມສີຕາມ Artwork.<br>• ການຫຸ້ມຫໍ່: 25 ໜ່ວຍ/ແກັດ. | **7,000 ໜ່ວຍ**<br><br> |

**ໝາຍເຫດ:**

1. ສາມາດເຂົ້າມາເບິ່ງຕົວຢ່າງ ຫຼື ຫາກຕ້ອງການຟາຍຣູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ສໍານັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງທີ 02/04/2025 ໃນໂມງລັດຖະການ.

2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກ ແຍກເປັນແຕ່ລະລາຍການ.
3. ການຄັດເລືອກຜູ້ສະໜອງແມ່ນຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

- **<u>ເອກະສານຊອງທີ 1</u>**:

1. ປະກອບເອກະສານໃນນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 2021, 2022, 2023.
2. ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການ ໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).
3. ເອກະສານເງື່ອນໄຂ ຂໍ້ 1 ແລະ 2 ແມ່ນ ສົ່ງຟາຍ pdf ເຂົ້າມາທີ່ Email: procurement@bcel.com.la, ສິນຄ້າຕົວຢ່າງທີ່ຈະເຂົ້າຮ່ວມປະມູນ ແມ່ນໃຫ້ມາສົ່ງກ່ອນ ວັນພຸດ, ທີ 02/04/2025 ເວລາ 11:00 ໂມງ ທີ່ ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

- **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂ ຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນພະຫັດ, ທີ **10/04/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.
2. ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ, ພ້ອມທັງລະບຸມື້ໝົດກຳນົດເວລາໃນໃບສະເໜີລາຄາດັ່ງກ່າວ (Expire date) ຢ່າງໜ້ອຍ 20 ວັນລັດຖະການ.
3. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 30/06/2025) ຫຼື ແຊັກທີ່ວີຊ້າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນພາຍໃນ 10 ວັນ.

**<u>ໝາຍເຫດ</u>**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງໄດ້ຜະລິດສິນຄ້າຕົວຈິງ 01 ອັນ ທີ່ຖືກຕ້ອງຕາມ Spec ທີ່ ທຄຕລ ລະບຸ ມາຜ່ານຕາມ Artwork ທີ່ ທຄຕລ ກຳນົດ ພາຍໃນ 14 ວັນ ແລະ ຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 45 ວັນ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ, ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮກ ຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ນັນທະລາດ ແກ້ວປະເສີດ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:

021 213200 ຕໍ່ 414

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:




ລູກຄ້າ VIP

# 10

## Giftset

- ✓ **Giftset Premium** ສຳລັບແຈກ ລູກຄ້າ VIP ຕ່າງໆ

### ຄຸນລັກສະນະ ແລະ ອອກແບບ

- ✓ ກ່ອງສີແດງ ສະກີນໂລໂກ້ ທຄຕລ




ລູກຄ້າທົ່ວໄປ + ພະນັກງານ

# 02

## ຈອກແກ້ວ C18512 12 ອອນ

- ✓ ປໍ້າໂລໂກ້ ທຄຕລ ສີທອງ
- ✓ ຂອບປາກແກ້ວ ສີທອງ
- ✓ ບັນຈຸໃສ່ກ່ອງ ສີແດງ ໂລໂກ້ທອງ





# 06

## ບິກ ທຄຕລ

- ✓ ບິກ
- ✓ ນ້ຳມຶກຟ້າ
- ✓ ສະກີນໂລໂກ້ ທຄຕລ




ລູກຄ້າທົ່ວໄປ + ພະນັກງານ

# 04

## ຄັນຮົ່ມພັບ (ສັ້ນ)

✓ **ຄັນຮົ່ມພັບ 01**
ສີແດງ ປະກອບມີ:
- ໂລໂກ້ BCEL ສີທອງ
- ໜັງສື BCEL bank


ທຄຕລ
BCEL
BCEL Bank
BCEL Bank
ທຄຕລ
BCEL




ລູກຄ້າທົ່ວໄປ + ພະນັກງານ

# 08

## ປື້ມ

- ✓ ປື້ມ ສຳລັບຂຽນ
- ✓ ຂະໜາດ A5

## ຄຸນລັກສະນະ ແລະ ອອກແບບ

- ✓ ປ້ຳຈົມ Debossing ໂລໂກ້ BCEL
- ✓ ປົກຫຼັງໃນ ຈະມີ ມີຂໍ້ມູນຕິດຕໍ່ ສນຍ ແລະ ສາຂາ ທົ່ວລະບົບ
- ✓ ປົກຫຼັງນອກ ຈະມີ ມີຂໍ້ມູນຕິດຕໍ່ ທຄຕລ

## ໜ້າປົກ

ໜ້າປົກ
Front

ດ້ານໃນໜ້າປົກ
Front-flip

ຫຼັງປົກ

## ປົກຫຼັງ
## Back

ທັນສະໄໝ ວ່ອງໄວ ໝັ້ນໃຈ

MODERN QUICK RELIABLE

1555 | BCEL Bank

www.bcel.com.la

ເລກທີ 01, ຖະໜົນປາງຄຳ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ. 2925
Head Office: No. 1, Pangkham Rd., Vientiane Cap., Lao PDR, P.O.Box 2925
ໂທ/Tel: (856-21) 213 200, 223243-4
SWIFT CODE: COEBLALA

## ດ້ານໃນປົກຫຼັງ
## Back-flip

### ສຳນັກງານໃຫຍ່ ແລະ ສາຂາທົ່ວປະເທດ

| ລ/ດ | ລາຍລະອຽດ | ສະຖານທີ່ | | ເບີໂທລະສັບ | ເບີແຟັກ |
|---|---|---|---|---|---|
| | | ບ້ານ | ເມືອງ | | |
| | ສຳນັກງານໃຫຍ່ | ຊຽງຍືນ | ຈັນທະບູລີ | 021 213200 | 021 213202 |
| 1 | ສາຂາໂພນໂຮງ | ໂພນໂຮງ | ໂພນໂຮງ | 023 212179 | 021 212178 |
| 2 | ສາຂາທ່າແຂກ | ຈອມແກ້ວ | ທ່າແຂກ | 051 212686 | 051 214409 |
| 3 | ສາຂາສະຫວັນນະເຂດ | ສຸນັນທາ | ໄກສອນພົມວິຫານ | 041 212261 | 041 212723 |
| 4 | ສາຂາຈຳປາສັກ | ຫຼັກເມືອງ | ປາກເຊ | 031 212770 | 031 212974 |
| 5 | ສາຂາຫຼວງພະບາງ | ໂພນແພງ | ຫຼວງພະບາງ | 071 252814 | 071 260598 |
| 6 | ສາຂາອຸດົມໄຊ | ນາຫວາຍເກົ່າ | ໄຊ | 081 211260 | 081 211262 |
| 7 | ສາຂາຫຼວງນ້ຳທາ | ໂພນໄຊ | ຫຼວງນ້ຳທາ | 086 211316 | 086 211319 |
| 8 | ສາຂາອັດຕະປື | ໂພນສະຫວ່າງ | ສາມັກຄີໄຊ | 036 211919 | 036 211939 |
| 9 | ສາຂານະຄອນຫຼວງວຽງຈັນ | ທົ່ງຂັນຄຳ | ຈັນທະບູລີ | 021 213205 | 021 219765 |
| 10 | ສາຂາບໍ່ແກ້ວ | ຄຸ້ມ | ຫ້ວຍຊາຍ | 084 212162 | 084 212170 |
| 11 | ສາຂາໄຊຍະບູລີ | ສີເມືອງ | ໄຊຍະບູລີ | 074 260038 | 074 260038 |
| 12 | ສາຂາຊຽງຂວາງ | ໂພນສະຫວັນໃຕ້ | ແປກ | 061 213097 | 061 213293 |
| 13 | ສາຂາວັງວຽງ | ສະຫວ່າງ | ວັງວຽງ | 023 511434 | 023 511403 |
| 14 | ສາຂາບໍລິຄຳໄຊ | ໂພນໄຊຍະທິດ | ປາກຊັນ | 054 280112 | 054 790918 |
| 15 | ສາຂາດົງໂດກ | ດ່ານຊຸງ | ໄຊທານີ | 021 771495 | 021 771496 |
| 16 | ສາຂາຫົວພັນ | ພັນໄຊ | ຊຳເໜືອ | 064 312090 | 064 312176 |
| 17 | ສາຂາຜົ້ງສາລີ | ໂພນໂຮມ | ບຸນເໜືອ | 088 210222 | - |
| 18 | ສາຂາເຊກອງ | ໃໝ່ທ່ວມເມືອງ | ລະມາມ | 038 211687 | 038 211689 |
| 19 | ສາຂາສາລະວັນ | ຫຼັກສອງ | ສາລະວັນ | 034 260016 | 034 212037 |
| 20 | ສາຂາໄຊເສດຖາ | ສີບຸນເຮືອງ | ຈັນທະບູລີ | 021 844200 | 021 844209 |

ລູກຄ້າທົ່ວໄປ

# 07
## ຖົງຜ້າ




- ✓ ຖົງຜ້າແຖມວາສ
- ✓ ເພື່ອບັນຈຸໃສ່ຂອງແຈກຕ່າງໆ ໃຫ້ກັບລູກຄ້າ
- ✓ ມີດຸມແຕັບ

### ຄຸນລັກສະນະ ແລະ ອອກແບບ

- ✓ Silk Print Screen ໂລໂກ້ ທຄຕລ


BCEL
280mm
1555
OneCare
BCEL Bank
www.bcel.com.la
350mm
120mm


1555
OneCare
BCEL Bank
www.bcel.com.la
280mm
350mm
120mm

ລູກຄ້າທົ່ວໄປ + ພະນັກງານ




# 03

## ຈອກນ້ຳ ເກັບ ອຸນຫະພູມ tumbler

**TB17 -** 510 ml

- ✓ ຈອກນ້ຳ ເກັບອຸນຫະພູມ ຄວາມເຢັນ
- ✓ ແຈກໃນກິດຈະກຳຕ່າງໆ ທາງການຕະຫຼາດ

### ຄຸນລັກສະນະ ແລະ ອອກແບບ

- ✓ ວັດສະດຸ Stainless Steel 304
- ✓ ປະລິມານບັນຈຸ: 30 ອອນ oz.
- ✓ silk screen Logo ສີທອງ